ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການແລະກິລາ
ຫ້ອງການ

ເລກທີ 1153./ຫກ
ນະຄອນຫຼວງວຽງຈັນ, ວັນທີ 12 ເມສາ 2020

# ແຈ້ງການ

**ເຖິງ:** ບັນດາ ສະໜາມກິລາກ໊ອຟ, ສະໜາມຝຶກຊ້ອມຕີກ໊ອຟໃນຂອບເຂດທົ່ວປະເທດ
**ເລື່ອງ:** ໃຫ້ປິດການບໍລິການຊົ່ວຄາວ ເພື່ອປ້ອງກັນການແຜ່ລະບາດເຊື້ອພະຍາດ COVID-19

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ ລົງວັນທີ 29/03/2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດCOVID-19;
- ອີງຕາມ ແຈ້ງການ ກ່ຽວກັບການຜັນຂະຫຍາຍຄຳສັ່ງເລກທີ 06 ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19 ຂອງຂະແໜງສຶກສາ ແລະ ກິລາ ສະບັບເລກທີ 400/ສສກ, ລົງວັນທີ 30 ມີນາ 2020.

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງ ບັນດາຜູ້ປະກອບການ ສະໜາມກິລາກ໊ອຟ ແລະ ສະໜາມຝຶກຊ້ອມຕີກ໊ອຟ (ສະໜາມໄດຣກ໊ອຟ) ໃນຂອບເຂດທົ່ວປະເທດໃຫ້ຊາບວ່າ ເພື່ອເປັນການຜັນຂະຫຍາຍການຈັດຕັ້ງປະຕິບັດຄຳສັ່ງ 06/ນຍ, ລົງວັນທີ 29 ມີນາ 2020 ແລະ ແຈ້ງການຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 400/ສສກ, ລົງວັນທີ 30 ມີນາ 2020, ຂໍ້ 5: ວ່າດ້ວຍການຫ້າມເຄື່ອນໄຫວທຸລະກິດກິລາກາຍຍະກຳທຸກຮູບແບບເຊັ່ນ: ສູນອອກກຳລັງກາຍ, ສະໜຸກເກີ, ສັງວຽນໄກ່, ເດີ່ນກິລາກາງແຈ້ງ ແລະ ໃນຮົ່ມ, ການໃຫ້ບໍລິການ ແລະ ຝຶກຊ້ອມນັກກິລາຂອງແຕ່ລະສະຫະພັນ ແລະ ອື່ນໆ. ສະນັ້ນ, ເພື່ອເປັນການປ້ອງກັນ, ສະກັດກັ້ນ ແລະ ຮັບມືກັບການແຜ່ລະບາດຂອງພະຍາດ COVID-19 ໃຫ້ໄດ້ຮັບຜົນສຳເລັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ຫ້ອງການກະຊວງສຶກສາທິການ ແລະ ກິລາ ອອກແຈ້ງການເພີ່ມເຕີມດັ່ງນີ້:

1. ໃຫ້ບັນດາຜູ້ປະກອບການສະໜາມກິລາກ໊ອຟ, ສະໜາມຝຶກຊ້ອມຕີກ໊ອຟ ໃນຂອບເຂດທົ່ວປະເທດ **ປິດການບໍລິການຊົ່ວຄາວ** ສະໜາມກິລາກ໊ອຟ ແລະ ສະໜາມຝຶກຊ້ອມຕີກ໊ອຟ;
2. ສຳລັບບາງສະໜາມກິລາກ໊ອຟ ທີ່ລວມມີກິດຈະການໂຮງແຮມ, ຣີສອດ ແລະ ຮ້ານອາຫານນັ້ນ ແມ່ນອະນຸຍາດໃຫ້ເປີດບໍລິການສະເພາະໃນພາກສ່ວນ ທີ່ກ່ຽວຂ້ອງກັບທີ່ພັກອາໄສ ແລະ ຮ້ານອາຫານເທົ່ານັ້ນ, ສະຖານທີ່ ທີ່ອະນຸຍາດໃຫ້ເປີດນີ້ ຕ້ອງປະຕິບັດຕາມມາດຕະການປ້ອງກັນ ທີ່ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ວາງອອກຢ່າງເຂັ້ມງວດ, ພ້ອມທັງໃຫ້ຈັດຕັ້ງໃຫ້ພະນັກງານຜັດປ່ຽນກັນມາເຮັດວຽກ ເພື່ອຫລຸດຜ່ອນຄວາມແອອັດ;
3. ໃຫ້ກົມກິລາລະດັບສູງ, ກະຊວງສຶກສາທິການ ແລະ ກິລາ ປະສານສົມທົບກັບ ສະຫະພັນກິລາກ໊ອຟແຫ່ງຊາດ ຈັດຕັ້ງໂຄສະນາເຜີຍແຜ່, ອະທິບາຍເນື້ອໃນຈິດໃຈແຈ້ງການສະບັບນີ້ ໃຫ້ຜູ້ປະກອບການສະໜາມກິລາກ໊ອຟ, ສະໜາມຝຶກຊ້ອມຕີກ໊ອຟໃຫ້ເຂົ້າໃຈ ແລະ ຮ່ວມມືຈັດຕັ້ງປະຕິບັດຢ່າງເຂັ້ມງວດ.
4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ວັນທີ 13 ເມສາ ເຖິງ 21 ເມສາ 2020. ໃນກໍລະນີມີການປ່ຽນແປງຫ້ອງການກະຊວງຈະແຈ້ງໃຫ້ຊາບຕື່ມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ຮັກສາການຫົວໜ້າຫ້ອງການ**

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ນ.ດາລາວອນ ກິດຕິພັນ

**ບ່ອນສົ່ງ**
ກົມກິລາລະດັບສູງ